ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 045 /ຫສນຍ.ລຂ

ນະຄອນຫຼວງວຽງຈັນ, ວັນທີ 14-1-2005

ເລກທີ 0493 ວັນທີ 12.1.05

## ແຈ້ງການ

ຮຽນ : ທ່ານລັດຖະມົນຕີວ່າການກະຊວງການຄ້າ.

ເລື່ອງ : ການຄົ້ນຄວ້າ ກ່ຽວກັບການກຳນົດ ກົນໄກການນຳເຂົ້າລົດ, ສິ້ນສ່ວນລົດ ເພື່ອມາປະກອບຢູ່ໂຮງງານ.

- ອີງຕາມເອກະສານລາຍງານ ຂອງກະຊວງການຄ້າ ສະບັບເລກທີ 1146/ກຄ.ຕປທ, ລົງວັນທີ 29/12/2004.
- ອີງຕາມການຕົກລົງ ຂອງກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ລົງວັນທີ 10/01/2005.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຕົກລົງຂອງຂັ້ນເທິງ ມາຍັງທ່ານ ຊາບວ່າ: ດ້ານພື້ນຖານ ເຫັນດີຕາມການຄົ້ນຄວ້າ ຂອງກະຊວງການຄ້າ, ແຕ່ໃຫ້ປັບປຸງຕື່ມບາງຈຸດດັ່ງນີ້:

1)- ໃຫ້ຫັນໂຮງງານປະກອບລົດມືສອງ ທີ່ໄດ້ຮັບອະນຸຍາດຜ່ານມາ ເປັນໂຮງງານປະກອບລົດໃໝ່ 100% ໃຫ້ສຳເລັດພາຍໃນປີ 2005.

2)- ໃຫ້ກຳນົດມາດຖານ ໂຮງງານປະກອບລົດໃໝ່ ໃຫ້ຮັດກຸມ, ເປັນຕົ້ນ ການນຳເຂົ້າສິ້ນສ່ວນລົດໃໝ່ ໃນແຕ່ລະດັບ ແລະ ແຕ່ລະປະເພດ, ບັນດາຕ່ອງໂສ້ຂອງການຜະລິດສິ້ນສ່ວນລົດ ແລະ ການປະກອບລົດ, ແລະ ກຳນົດໝາຍເວລາໃຫ້ໂຮງງານຜະລິດສິ້ນສ່ວນ ແລະ ປະກອບລົດເອງ ຢູ່ພາຍໃນປະເທດ ໄດ້ເປັນສ່ວນໃຫຍ່ ຫຼື ທັງໝົດ, ຄວນມີມາດຕະການຕ່າງໆ ເພື່ອຈຳກັດການສວຍໂອກາດຫາຜົນປະໂຫຍດ ຈາກອັດຕາພາສີ, ອາກອນຜິດດ່ຽງ ລະຫວ່າງ ການນຳເຂົ້າສິ້ນສ່ວນລົດຈາກຕ່າງປະເທດທັງໝົດ ແລະ ການນຳເຂົ້າລົດເປັນຄັນ ໂດຍບໍ່ພະຍາຍາມ ທີ່ຈະຍົກລະດັບໂຮງງານປະກອບລົດ ໃຫ້ກາຍເປັນໂຮງງານຜະລິດ ໃນອະນາຄົດ.

3)- ໃຫ້ສືບຕໍ່ປະຕິບັດນະໂຍບາຍ ການນຳເຂົ້າລົດມືສອງ 80% ໃຫ້ແກ່ວິລະຊົນແຫ່ງຊາດ, ນັກຮົບ



7145

ຂາງຂັ້ນ ແລະ ນັກປະຕິວັດອະວຸໂສ ຕາມດຳລັດ 71/ນຍ, ລົງວັນທີ 8 / 5 / 2002, ແຕ່ໃຫ້ມີມາດຕະການຮັດກຸມກວ່າເກົ່າ ເພື່ອຈຳກັດຊ່ອງຫວ່າງ ແລະ ການສວຍໂອກາດ.

• ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ຮລ ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ບົວງຄຳ ວົງດາລາ

ບ່ອນນຳສົ່ງ

| | |
|---|---|
| ນາຍົກ, ຮອງນາຍົກລັດຖະມົນຕີ | 5 ສະບັບ |
| ຫ້ອງວ່າການສູນກາງພັກ | 1 ສະບັບ |
| ກະຊວງການເງິນ | 1 ສະບັບ |
| ກະຊວງ ກຊປກ | 1 ສະບັບ |
| ກະຊວງອຸດສາຫະກຳ | 1 ສະບັບ |
| ກະຊວງແຮງງານ | 1 ສະບັບ |
| ຄມສ. | 1 ສະບັບ |
| ເກັບມ້ຽນ | 9 ສະບັບ |